**MEMORANDUM OF AGREEMENT**
**between**

**THANGONE IRRIGATION COLLEGE, LAO P.D.R.**
**(Lao People's Democratic Republic)**
**and**

**FACULTY OF AGRICULTURAL PRODUCTION, MAEJO UNIVERSITY**

**(The Kingdom of Thailand)**

## 1. ***OBJECTIVES:***

Thangone Irrigation College (NIC), Lao P.D.R. and the Faculty of Agricultural Production, Maejo University (MJU), Thailand hereby agree to enhance and formalize the existing relations between the two parties with a focus on strengthening The exchanges in education, academics, student activities, research studies and culture.

## 2. ***PRINCIPLES OF THE AGREEMENT:***

Both parties agree to cooperate and coordinate closely with each other for the equal and mutual benefits of both educational institutions and for the continuous development of higher education in the region.

## 3. ***MAIN ACTIVITIES:***

The two parties will conduct the following main activities:

a) To exchange students, scholars and faculties (professors, lecturers, administrators or researchers);
b) To collaborate staff development programs;
c) To exchange academic information and materials of mutual interest;
d) To organize joint research programs;
e) To have other academic exchanges as agreed upon by both parties; and
f) To promote the partnership via website, newspapers and other media.

Detailed terms of cooperation for each specific activity implemented under this Memorandum of Agreement shall be mutually discussed and agreed upon in a written form by both parties prior to any initiation of the respective activities. Each institution shall designate a liaison officer to coordinate any specific activities agreed upon.

4. ***Budget:***

The budget for implementing these activities will be discussed and agreed by both parties for each activity.

5. ***EFFECTIVENESS and DURATION of The AGREEMENT:***

This agreement shall be effective upon signatures by both parties. Any additions or changes need a mutual agreement in written form by both institutions.This memorandum of agreement shall be binding for four (4) years and can be renewed for a further period upon agreement by both parties.

Mr. Anousone Khounsombat
Director
Thangone Irrigation College

Date 04 DEC 2024

Associate Professor Dr. Phutthisun Kruekum
Dean Faculty of Agricultural Production
Maejo University

Date 04 DEC 2024

MAEJO UNIVERSITY
FACULTY OF AGRICULTURAL PRODUCTION

ບົດບັນທຶກການຕົກລົງເຫັນດີ

ລະຫວ່າງ

ວິທະຍາໄລຊົນລະປະທານ ທ່າງ່ອນ

(ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ)

ແລະ

ຄະນະຜະລິດຕະກຳການກະເສດ ມະຫາວິທະຍາໄລ ແມ່ໂຈ້

(ລາຊະອານາຈັກໄທ)

## 1. ຈຸດປະສົງ:

ວິທະຍາໄລຊົນລະປະທານ ທ່າງ່ອນ (TIC), ສປປລາວ ແລະ ຄະນະຜະລິດຕະກຳການກະເສດ ມະຫາວິທະຍາໄລແມ່ໂຈ້, ປະເທດໄທ ເຫັນດີເປັນເອກະພາບໃນການເສີມຂະຫຍາຍສາຍພົວພັນທີ່ມີຢູ່ ລະຫວ່າງ ທັງສອງຝ່າຍ ຢ່າງເປັນທາງການ ໂດຍສຸມໃສ່ການສ້າງຄວາມເຂັ້ມແຂງໃນການແລກປ່ຽນບົດຮຽນດ້ານການສຶກສາ, ວິຊາການ, ກິດຈະກຳນັກສຶກສາ, ການສຶກສາຄົ້ນຄວ້າ ແລະ ວັດທະນະທຳ.

## 2. ເນື້ອໃນຂອງການຕົກລົງເຫັນດີ:

ທັງສອງຝ່າຍເຫັນດີຮ່ວມມື ແລະ ປະສານງານເຊິ່ງກັນ ແລະ ກັນຢ່າງແໜ້ນແຟ້ນ ເພື່ອຜົນປະໂຫຍດທີ່ສະເໝີພາບ ແລະ ຕ່າງຝ່າຍຕ່າງມີຜົນປະໂຫຍດ ຂອງທັງສອງສະຖາບັນການສຶກສາ ແລະ ເພື່ອການພັດທະນາການສຶກສາຊັ້ນສູງໃນພາກພື້ນຢ່າງບໍ່ຢຸດຢັ້ງ.

## 3. ກິດຈະກຳຫຼັກ:

ສອງຝ່າຍຈະໄດ້ດຳເນີນການເຄື່ອນໄຫວບັນດາກິດຈະກຳຕົ້ນຕໍດັ່ງນີ້:

1) ແລກປ່ຽນນັກສຶກສາ, ນັກວິຊາການ ແລະ ອາຈານ, ຜູ້ບັນລະຍາຍ, ຜູ້ບໍລິຫານ ຫຼື ນັກຄົ້ນຄວ້າ ຂອງຄະນະວິຊາ;
2) ຮ່ວມມືໂຄງການພັດທະນາພະນັກງານ;
3) ແລກປ່ຽນຂໍ້ມູນຂ່າວສານທາງວິຊາການ ແລະ ເຄື່ອງມືທີ່ມີຄວາມສົນໃຈເຊິ່ງກັນ ແລະ ກັນ;
4) ຈັດຕັ້ງໂຄງການຄົ້ນຄວ້າຮ່ວມກັນ;
5) ເພື່ອໃຫ້ມີການແລກປ່ຽນທາງການຮຽນອື່ນໆ ຕາມການຕົກລົງຂອງທັງສອງຝ່າຍ; ແລະ
6) ເພື່ອສົ່ງເສີມການຮ່ວມມືໂດຍຜ່ານເວັບໄຊທ໌, ຫນັງສືພິມ ແລະ ສື່ມວນຊົນອື່ນໆ.

ລາຍລະອຽດຂອງການຮ່ວມມືສຳລັບແຕ່ລະກິດຈະກຳສະເພາະເຈາະຈົງທີ່ໄດ້ປະຕິບັດພາຍໃຕ້ບົດບັນທຶກຂອງການຕົກລົງເຫັນດີສະບັບນີ້ ຈະຕ້ອງໄດ້ມີການປຶກສາຫາລື ແລະ ຕົກລົງເຫັນດີຮ່ວມກັນໃນຮູບແບບ

ເປັນລາຍລັກອັກສອນຂອງທັງສອງຝ່າຍກ່ອນທີ່ຈະລິເລີ່ມກິດຈະກຳຕ່າງໆ. ແຕ່ລະສະຖາບັນຈະແຕ່ງຕັ້ງພະນັກງານຕິດຕໍ່ພົວພັນເພື່ອປະສານງານກິດຈະກຳສະເພາະໃດໜຶ່ງທີ່ໄດ້ຮັບການຕົກລົງ.

### 4. ງົບປະມານ:

ງົບປະມານສຳລັບການຈັດຕັ້ງປະຕິບັດບັນດາກິດຈະກຳເຫຼົ່ານີ້ ທັງສອງຝ່າຍ ຈະໄດ້ປຶກສາຫາລື ແລະ ຕົກລົງກັນລະອຽດໃນແຕ່ລະກິດຈະກຳ ເພື່ອຈະໄດ້ນຳໄປຈັດຕັ້ງປະຕິບັດ.

### 5. ປະສິດທິຜົນ ແລະ ໄລຍະເວລາຂອງການຕົກລົງເຫັນດີ:

ບົດບັນທຶກການຕົກລົງເຫັນດີສະບັບນີ້ຈະມີຜົນສັກສິດຕາມການລົງນາມໂດຍທັງສອງຝ່າຍ. ການເພີ່ມເຕີມ ຫຼື ການປ່ຽນແປງໃດໆ ຕ້ອງມີການຕົກລົງຮ່ວມກັນເປັນລາຍລັກອັກສອນຂອງທັງສອງສະຖາບັນ. ບົດບັນທຶກສະບັບນີ້ຈະມີຜົນຜູກມັດເປັນເວລາ 4 ປີ (ສີ່ປີ) ແລະ ສາມາດຕໍ່ອາຍຸໄດ້ອີກຕາມການຕົກລົງຂອງທັງສອງຝ່າຍ.

| | |
|---|---|
| ທ່ານ ອານຸສອນ ຄູນສິນບັດ | ຮອງສາດສະດາຈານ ດຣ.ພຸດທິສັນ ເຄືອຄຳ |
| ຜູ້ອຳນວຍການ | ຄະນະບໍດີ ຄະນະຜະລິດຕະກຳການກະເສດ |
| ວິທະຍາໄລຊົນລະປະທານ ທ່າງ່ອນ | ມະຫາວິທະຍາໄລແມ່ໂຈ້ |
| ວັນທີ 04 DEC 2024 | ວັນທີ 04 DEC 2024 |